# ຮັບສະໝັກເພື່ອນຮ່ວມງານ

ຮ່ວມເປັນສ່ວນໜຶ່ງ
ສູ່ຄວາມສຳເລັດກັບພວກເຮົາ...



**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ** ເປັນທະນາຄານທີ່ດຳເນີນການເຄື່ອນໄຫວວຽກງານພາຍໃຕ້ການຄຸ້ມຄອງຂອງກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ. ທຄຕລ ມີຄວາມມຸ່ງໝັ້ນໃນການສ້າງປະໂຫຍດ ແລະ ອຳນວຍຄວາມສະດວກໃນການເຮັດທຸລະກຳ ທາງດ້ານການເງິນໃຫ້ແກ່ລູກຄ້າ. ປະຈຸບັນ ທຄຕລ ມີ **20** ສາຂາ ແລະ ຫຼາຍກວ່າ **90** ໜ່ວຍບໍລິການທົ່ວປະເທດ. ພວກເຮົາມີຄວາມຍິນດີ ແລະ ຕ້ອງການເພື່ອນຮ່ວມງານຈຳນວນໜຶ່ງ ເພື່ອເຂົ້າມາຮ່ວມສ້າງສາ ແລະ ພັດທະນາ ທຄຕລ ໃຫ້ມີຄວາມກ້າວໜ້າ ແລະ ເຕີບໃຫຍ່ໄປພ້ອມໆກັນ.

## ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສຳນັກງານໃຫຍ່ ມີຄວາມຕ້ອງການຮັບພະນັກງານ ເພື່ອປະກອບເຂົ້າສູນໄອທີ ແລະ ສູນບັດ, ດັ່ງມີລາຍລະອຽດລຸ່ມນີ້:

### 1. ຕຳແໜ່ງ: ພະນັກງານວິຊາການພັດທະນາ ແລະ ຄຸ້ມຄອງລະບົບລາຍງານ, ສູນໄອທີ ຈຳນວນ 02 ຕຳແໜ່ງ

- ເພດ: **ຊາຍ ຫຼື ຍິງ**, ອາຍຸ **22-30** ປີ (ເກີດລະຫວ່າງ **1990-1998**).
- ລະດັບການສຶກສາ: **ຮຽນຈົບປະລິນຍາຕີຂຶ້ນໄປ** ສາຂາວິທະຍາສາດຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ອື່ນໆທີ່ກ່ຽວຂ້ອງກັບໄອທີ (ຍົກເວັ້ນສາຂາບໍລິຫານທຸລະກິດໄອທີ).
- ມີຄວາມຮູ້ດ້ານພາສາອັງກິດ, ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງໃນລະດັບດີ (ເວົ້າ, ຂຽນ, ອ່ານ, ຟັງໄດ້ຄ່ອງແຄ້ວ) ຍົກເວັ້ນພາສາໄທ.
- ຄະແນນສະເລ່ຍຮຽນຈົບ **CGPA 2,70/4,00 ຫຼື 6,75/10 ຂຶ້ນໄປ ຫຼື ທຽບເທົ່າ.**
- ມີຄວາມຮູ້ໃນການຂຽນພາສາໂປຼແກມໃດໜຶ່ງເຊັ່ນ: Java, PHP, Java Script, Angular, React, Vue.js, Flutter, Ionic, Python.
- ຮູ້ນຳໃຊ້ຖານຂໍ້ມູນ Oracle, Maria DB, MySQL.
- ມີຄວາມຮູ້ດ້ານ Database programing ໄດ້ເປັນຢ່າງດີເຊັ່ນ: Store procedure, Function.

### 2. ຕຳແໜ່ງ: ພະນັກງານວິຊາການຄຸ້ມຄອງລະບົບຖານຂໍ້ມູນ, ສູນໄອທີ ຈຳນວນ 01 ຕຳແໜ່ງ

- ເພດ: **ຊາຍ ຫຼື ຍິງ**, ອາຍຸ **22-30** ປີ (ເກີດລະຫວ່າງ **1990-1998**).
- ລະດັບການສຶກສາ: **ຮຽນຈົບປະລິນຍາຕີຂຶ້ນໄປ** ສາຂາວິທະຍາສາດຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ອື່ນໆທີ່ກ່ຽວຂ້ອງກັບໄອທີ (ຍົກເວັ້ນສາຂາບໍລິຫານທຸລະກິດໄອທີ).
- ມີຄວາມຮູ້ດ້ານພາສາອັງກິດ, ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງໃນລະດັບດີ (ເວົ້າ, ຂຽນ, ອ່ານ, ຟັງໄດ້ຄ່ອງແຄ້ວ) ຍົກເວັ້ນພາສາໄທ.
- ຄະແນນສະເລ່ຍຮຽນຈົບ **CGPA 2,70/4,00 ຫຼື 6,75/10 ຂຶ້ນໄປ ຫຼື ທຽບເທົ່າ.**
- ມີຄວາມຮູ້ໃນການນຳໃຊ້ລະບົບປະຕິບັດການ Linux ຫຼື Unix ໃນລະດັບດີ, ມີຄວາມຮູ້ໃນການນຳໃຊ້ລະບົບຖານຂໍ້ມູນເຊັ່ນ: MariaDB, MySQL, MongoDB, Oracle ແລະ ອື່ນໆ.
- ມີຄວາມຮູ້ໃນການນຳໃຊ້ Open Source software ທີ່ກ່ຽວກັບລະບົບຖານຂໍ້ມູນ ແລະ ລະບົບປະຕິບັດການ Linux ຫຼື Unix.

3. **ຕຳແໜ່ງ: ພະນັກງານວິຊາການພັດທະນາໂປຼແກມ (IT Programmer), ສູນໄອທີ ຈຳນວນ 03 ຕຳແໜ່ງ**
**ຕຳແໜ່ງ: ພະນັກງານຄຸ້ມຄອງໂປຼແກມທະນາຄານ, ສູນໄອທີ 02 ຕຳແໜ່ງ**
**ຕຳແໜ່ງ: ພະນັກງານວິຊາການ E-Banking, ສູນໄອທີ 01 ຕຳແໜ່ງ**

- ເພດ: **ຊາຍ ຫຼື ຍິງ**, ອາຍຸ **22-30 ປີ** (ເກີດລະຫວ່າງ **1990-1998**).
- ລະດັບການສຶກສາ: **ຮຽນຈົບປະລິນຍາຕີຂຶ້ນໄປ** ສາຂາວິທະຍາສາດຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ອື່ນໆທີ່ກ່ຽວຂ້ອງກັບໄອທີ (ຍົກເວັ້ນສາຂາບໍລິຫານທຸລະກິດໄອທີ).
- ມີຄວາມຮູ້ດ້ານພາສາອັງກິດ, ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງໃນລະດັບດີ (ເວົ້າ, ຂຽນ, ອ່ານ, ຟັງໄດ້ຄ່ອງແຄ້ວ) ຍົກເວັ້ນພາສາໄທ.
- ຄະແນນສະເລ່ຍຮຽນຈົບ **CGPA 2,70/4,00 ຫຼື 6,75/10 ຂຶ້ນໄປ ຫຼື ທຽບເທົ່າ.**
- ມີຄວາມຮູ້ໃນການຂຽນພາສາໂປຼແກມໃດໜຶ່ງເຊັ່ນ: Java, PHP, Java Script, Angular, React, Vue.js, Flutter, Ionic, Python.
- ຮູ້ນຳໃຊ້ຖານຂໍ້ມູນ Oracle, Maria DB, MySQL.

4. **ຕຳແໜ່ງ: ພະນັກງານວິຊາການເຕັກນິກຕິດຕັ້ງ ແລະ ສ້ອມແປງ (IT Support), ສູນໄອທີ ຈຳນວນ 01 ຕຳແໜ່ງ**

- ເພດ: **ຊາຍ**, ອາຍຸ **22-30 ປີ** (ເກີດລະຫວ່າງ **1990-1998**).
- ລະດັບການສຶກສາ: **ຮຽນຈົບປະລິນຍາຕີຂຶ້ນໄປ** ສາຂາວິສະວະກຳອີເລັກໂຕຼນິກ, ວິທະຍາສາດຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ອື່ນໆທີ່ກ່ຽວຂ້ອງກັບໄອທີ (ຍົກເວັ້ນສາຂາບໍລິຫານທຸລະກິດໄອທີ).
- ມີຄວາມຮູ້ດ້ານພາສາອັງກິດ, ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງໃນລະດັບດີ (ເວົ້າ, ຂຽນ, ອ່ານ, ຟັງໄດ້ຄ່ອງແຄ້ວ) ຍົກເວັ້ນພາສາໄທ.
- ຄະແນນສະເລ່ຍຮຽນຈົບ **CGPA 2,70/4,00 ຫຼື 6,75/10 ຂຶ້ນໄປ ຫຼື ທຽບເທົ່າ.**
- ມີຄວາມຮູ້ກ່ຽວກັບການຕິດຕັ້ງ, ສ້ອມແປງ ແລະ ແກ້ໄຂບັນຫາອຸປະກອນໄອທີ Hardware ຕ່າງໆໄດ້ເຊັ່ນ: ເຄື່ອງຄອມພິວເຕີ, PC, Notebook, Printers, Servers, ລະບົບກ້ອງວົງຈອນປິດ, ລະບົບເຕືອນໄພ, ລະບົບ Access Control ແລະ ອຸປະກອນໄອທີອື່ນໆ.
- ມີຄວາມສາມາດຕິດຕັ້ງ ແລະ ແກ້ໄຂບັນຫາລະບົບປະຕິບັດການ Windows, Open source ແລະ Application Software Program ຕ່າງໆໄດ້, ມີຄວາມຮູ້ດ້ານການຕິດຕັ້ງລະບົບເຄືອຂ່າຍພາຍໃນ-ພາຍນອກ, ສາມາດເດີນລະບົບສາຍຕ່າງໆ ພາຍໃນອາຄານບໍ່ວ່າຈະເປັນສາຍໄຟຟ້າ, ສາຍເຄືອຂ່າຍ, ສາຍກ້ອງວົງຈອນປິດ.
- ສາມາດນຳໃຊ້ອຸປະກອນເຄື່ອງການຊ່າງ ແລະ ມີຄວາມຮູ້ທາງດ້ານລະບົບໄຟຟ້າອີເລັກໂຕຼນິກຍິ່ງເປັນການດີ.

5. **ຕຳແໜ່ງ: ພະນັກງານວິຊາການເຕັກນິກຕິດຕັ້ງ ແລະ ສ້ອມແປງຕູ້ຝາກເງິນ ແລະ Kiosk ປະກອບໃຫ້ສູນບັດ 03 ຕຳແໜ່ງ.**

➢ **ເງື່ອນໄຂການຮັບສະໝັກ:**

- ເພດ: **ຊາຍ**, ອາຍຸ **22-30 ປີ** (ເກີດລະຫວ່າງ **1990-1998**)
- ລະດັບການສຶກສາ: **ຮຽນຈົບປະລິນຍາຕີຂຶ້ນໄປ** ສາຂາວິສະວະກຳອີເລັກໂຕຼນິກ, ວິສະວະກຳຄອມພິວເຕີ, ວິທະຍາສາດຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ອື່ນໆທີ່ກ່ຽວຂ້ອງກັບໄອທີ (ຍົກເວັ້ນສາຂາບໍລິຫານທຸລະກິດໄອທີ).
- ມີຄວາມຮູ້ດ້ານພາສາອັງກິດ, ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງໃນລະດັບດີ (ເວົ້າ, ຂຽນ, ອ່ານ, ຟັງໄດ້ຄ່ອງແຄ້ວ) ຍົກເວັ້ນພາສາໄທ.
- ຄະແນນສະເລ່ຍຮຽນຈົບ **CGPA 2,70/4,00 ຫຼື 6,75/10 ຂຶ້ນໄປ ຫຼື ທຽບເທົ່າ.**
- ມີຄວາມຮູ້ກ່ຽວກັບການຕິດຕັ້ງ, ສ້ອມແປງ ແລະ ແກ້ໄຂບັນຫາອຸປະກອນໄອທີ Hardware ຕ່າງໆໄດ້ເຊັ່ນ: ເຄື່ອງຄອມພິວເຕີ, PC, Notebook, Printers, Servers, ລະບົບກ້ອງວົງຈອນປິດ, ລະບົບເຕືອນໄພ, ລະບົບ Access Control ແລະ ອຸປະກອນໄອທີອື່ນໆ.

- ມີຄວາມສາມາດຕິດຕັ້ງ ແລະ ແກ້ໄຂບັນຫາລະບົບປະຕິບັດການ Windows, Open source ແລະ Application Software Program ຕ່າງໆໄດ້, ມີຄວາມຮູ້ດ້ານການຕິດຕັ້ງລະບົບເຄືອຂ່າຍພາຍໃນ-ພາຍນອກ, ສາມາດເດີນລະບົບສາຍຕ່າງໆ ພາຍໃນອາຄານບໍ່ວ່າຈະເປັນສາຍໄຟຟ້າ, ສາຍເຄືອຂ່າຍ, ສາຍກ້ອງວົງຈອນປິດ.
- ສາມາດນຳໃຊ້ອຸປະກອນເຄື່ອງການຊ່າງ ແລະ ມີຄວາມຮູ້ທາງດ້ານລະບົບໄຟຟ້າອີເລັກໂຕຼນິກຍິ່ງເປັນການດີ.

- **ຄຸນລັກສະນະເພີ່ມຕື່ມຂອງຜູ້ສະໝັກແຕ່ລະຕຳແໜ່ງງານ**

- ຜູ້ສະໝັກຕ້ອງເປັນຄົນສັນຊາດລາວ, ມີສຸຂະພາບແຂງແຮງດີ.
- ມີຄວາມຊື່ສັດບໍລິສຸດ, ມະນຸດສຳພັນດີ, ບຸກຄະລິກວ່ອງໄວຫ້າວຫັນ ແລະ ອົດທົນ.
- ລະອຽດຮອບຄອບ, ມີລະບຽບວິໄນ ແລະ ມີຄວາມຮັບຜິດຊອບສູງ.
- ມີຄວາມສາມັກຄີ, ສາມາດເຮັດວຽກເປັນທີມໄດ້.
- ຜູ້ສະໝັກຕ້ອງ **"ບໍ່ແມ່ນພະນັກງານລັດຖະກອນ"** ຂອງອົງການຈັດຕັ້ງລັດ, ຖ້າຫາກການຈັດຕັ້ງຫາກສືບຮູ້ພາຍຫຼັງວ່າໄດ້ມີການໃຫ້ຂໍ້ມູນທີ່ບໍ່ເປັນຄວາມຈິງແມ່ນຈະຖືກຕັດສິດ ແລະ ບໍ່ໄດ້ຮັບການພິຈາລະນາ.
- ບໍ່ເຄີຍກະທຳຄວາມຜິດໂດຍເຈດຕະນາທີ່ຜິດກົດໝາຍຂອງ ສປປ ລາວ ຫຼື ຢູ່ໃນຂັ້ນຕອນການດຳເນີນຄະດີໃດໜຶ່ງ.
- ບໍ່ເຄີຍຖືກໄລ່ອອກ ຫຼື ປະລະໜ້າທີ່ຈາກອົງກອນໃດໜຶ່ງມາກ່ອນ.
- ສາມາດເຮັດວຽກພາຍໃຕ້ຄວາມກົດດັນ, ກົງຕໍ່ເວລາ ແລະ ມີຄວາມເສຍສະຫຼະ.
- ມີໃຈຮັກໃນວຽກງານບໍລິການ, ວຽກງານທະນາຄານ ແລະ ວຽກງານທີ່ການຈັດຕັ້ງມອບໝາຍໃຫ້.

**<u>ວິທີສະໝັກວຽກ:</u> ຜູ້ທີ່ມີເງື່ອນໄຂຄົບຖ້ວນຕາມການປະກາດ ແລະ ມີຄວາມສົນໃຈທີ່ຈະສະໝັກວຽກໃນຕຳແໜ່ງຕ່າງໆແມ່ນໃຫ້ອ່ານລາຍລະອຽດ ແລະ ປະຕິບັດຕາມຂັ້ນຕອນລຸ່ມນີ້:**

1) ເຂົ້າໄປປະກອບແບບຟອມສະໝັກທາງອອນໄລໄດ້ທີ່ ເວັບໄຊຂອງ ທຄຕລ **www.bcel.com.la** > ສະໝັກວຽກ > ສະໝັກວຽກໄອທີກັບ BCEL > ເລືອກຕຳແໜ່ງທີ່ຕົນເອງຕ້ອງການສະໝັກ > ຈາກນັ້ນປະກອບຂໍ້ມູນຂອງຕົນລົງແບບຟອມ.

- ສຳລັບການປະກອບຂໍ້ມູນຂອງຜູ້ສະໝັກລົງໃນແບບຟອມ ຕ້ອງລະບຸທຸກຂໍ້ມູນໃຫ້ຄົບຖ້ວນຕາມແບບຟອມກຳນົດ ໂດຍສະເພາະອີເມວ ແລະ ເບີໂທຂອງຜູ້ສະໝັກຈະຕ້ອງເປັນອີເມວ ແລະ ເບີໂທທີ່ນຳໃຊ້ປະຈຸບັນ ແລະ ເປີດນຳໃຊ້ປົກກະຕິ.
- ເອກະສານທີ່ມີຄວາມຈຳເປັນຕ້ອງປະກອບລົງໃນແບບຟອມສະໝັກມີ: **ໃບປະກາດ ແລະ ໃບຄະແນນວິຊາສະເພາະຂອງ ຜູ້ສະໝັກ (ທັງສະບັບພາສາອັງກິດ ແລະ ພາສາລາວ),** ສ່ວນເອກະສານອື່ນໆທີ່ລະບຸໃນຂໍ້ **4** ຂ້າງລຸ່ມ ແມ່ນບໍ່ຈຳເປັນຕ້ອງອັບໂຫຼດລົງໃບແບບຟອມ ຊຶ່ງຜູ້ສະໝັກຈະໄດ້ປະກອບມາພາຍຫຼັງ ຖ້າຫາກຜ່ານການຄັດເລືອກໃຫ້ເຂົ້າສອບເສັງແລ້ວ.

2) ຜູ້ສະໝັກທີ່ໄດ້ປະກອບຂໍ້ມູນຕ່າງໆໃນແບບຟອມສະໝັກທາງອອນໄລສຳເລັດ ແລະ ຄົບຖ້ວນ ຈະໄດ້ຮັບອີເມວແຈ້ງລະຫັດຜູ້ສະໝັກຈາກ ທຄຕລ ແຕ່ຖ້າຜູ້ສະໝັກທີ່ບໍ່ໄດ້ຮັບການແຈ້ງລະຫັດຈາກ ທຄຕລ ແມ່ນໝາຍເຖິງການສະໝັກບໍ່ສຳເລັດ ຫຼື ລະບົບມີການ Reject ອັດຕະໂນມັດ ຊຶ່ງສາມາດຕິດຕໍ່ສອບຖາມເພີ່ມຕື່ມໄດ້ກັບພະແນກຈັດຕັ້ງ-ພະນັກງານ ຕາມລາຍລະອຽດຂໍ້ທີ 7

3) ຜູ້ສະໝັກຈະຕ້ອງເອົາໃຈໃສ່ໃນການບັກທຶກ ຫຼື ຈື່ຈຳ ລະຫັດສະໝັກຂອງຕົນເອງຢ່າງລະອຽດ ເນື່ອງຈາກ ທຄຕລ ຈະແຈ້ງຂໍ້ມູນຜູ້ສະໝັກທີ່ຜ່ານການຄັດເລືອກໃຫ້ເຂົ້າສອບເສັງ ອອກທາງເວັບໄຊຂອງ ທຄຕລ ເປັນລະຫັດປະຈຳຕົວຂອງນັກສອບເສັງເທົ່ານັ້ນ (ຈະບໍ່ໄດ້ແຈ້ງຊື່ ແລະ ນາມສະກຸນນັກສອບເສັງ).

4) **ກຳນົດເວລາໃນການເປີດ-ປິດຮັບສະໝັກ:**

- ເປີດຮັບສະໝັກອອນໄລຜ່ານທາງເວັບໄຊ ທຄຕລ ນັບແຕ່ວັນທີ **02-15/03/2020.**
- ກຳນົດເວລາໃນການແຈ້ງລະຫັດຜູ້ທີ່ຜ່ານ ເຂົ້າຮອບການສອບເສັງຜ່ານທາງເວັບໄຊ ທຄຕລ ມີດັ່ງນີ້:

- ຜູ້ສະໝັກນັບແຕ່ວັນທີ **02-08/03/2020** ແຈ້ງລະຫັດຜູ້ທີ່ຜ່ານໃນວັນ **10/03/2020.**

– ຜູ້ສະໝັກນັບແຕ່ວັນທີ **09-15/03/2020** ແຈ້ງລະຫັດຜູ້ທີ່ຜ່ານໃນວັນ **16/03/2020.**

- ສຳລັບຜູ້ທີ່ບໍ່ຜ່ານ ທາງ ທຄຕລຈະແຈ້ງໃຫ້ຊາບຜ່ານອີເມວ ແລະ ເບີໂທ ທີ່ຜູ້ສະໝັກໄດ້ໃຊ້ໃນການສະໝັກອອນລາຍ.
- ຜູ້ສະໝັກອອນໄລທີ່ຜ່ານເງື່ອນໄຂຈະຕ້ອງປະກອບເອກະສານມາໃຫ້ພະແນກຈັດຕັ້ງ-ພະນັກງານ ຢູ່ທີ່ຊັ້ນ 4 ຕຶກ C ສຳນັກງານໃຫຍ່ ນັບແຕ່ວັນທີ **10-27/03/2020** ໃນວັນ ແລະ ໂມງລັດຖະການ, **ວັນຈັນ-ວັນສຸກ, 08:30-15:30 ໂມງ**

**ເອກະສານປະກອບມີ:**

- ✓ ຟອມສະໝັກງານ ຂອງ ທຄຕລ(ດາວໂຫຼດໄດ້ທີ່ເວບໄຊ ທຄຕລ)
- ✓ ຊີວະປະຫວັດເປັນເພີ່ນ 3-4 ໜ້າ (ສະບັບຕົ້ນຈ້ຳກາແດງ ແລະ ບໍ່ເກີນ 3 ເດືອນ).
- ✓ ຮູບຖ່າຍ 3x4 ຈຳນວນ 03 ໃບ (ຖ່າຍບໍ່ເກີນ 3 ເດືອນ).
- ✓ ສຳເນົາບັດປະຈຳຕົວ ຫຼື Passport ແລະ ສຳມະໂນຄົວ.
- ✓ ສຳເນົາໃບປະກາດວິຊາສະເພາະ ແລະ ໃບຄະແນນ (ໃຫ້ຖືສະບັບຕົ້ນມາພ້ອມ).
- ✓ ສຳເນົາໃບປະກາດມໍປາຍ.
- ✓ ໃບກວດສຸຂະພາບ (ສະບັບຕົ້ນຈ້ຳກາແດງ ແລະ ບໍ່ເກີນ 6 ເດືອນ).
- ✓ ໃບຢັ້ງຢືນຄ້ຳປະກັນ (ສະບັບຕົ້ນຈ້ຳກາແດງ ແລະ ບໍ່ເກີນ 3 ເດືອນ).
- ✓ ໃບແຈ້ງໂທດ (ສະບັບຕົ້ນຈ້ຳກາແດງ ແລະ ບໍ່ເກີນ 3 ເດືອນ).
- ✓ ໃບຢັ້ງຢືນທີ່ຢູ່ (ສະບັບຕົ້ນຈ້ຳກາແດງ ແລະ ບໍ່ເກີນ 3 ເດືອນ).
- ✓ ໃບຢັ້ງຢືນກວດສານເສບຕິດ

- ຜູ້ສະໝັກທີ່ບໍ່ປະກອບເອກະສານ ແລະ ມາຍື່ນສະໝັກຕາມກຳນົດເວລາແມ່ນຈະບໍ່ມີສິດເຂົ້າສອບເສັງກັບ ທຄຕລ.

**5)** ຜູ້ສະໝັກທີ່ປະກອບເອກະສານຄົບຖ້ວນ ແລະ ມີເງື່ອນໄຂຖືກຕ້ອງຕາມປະກາດເທົ່ານັ້ນ ທາງ ທຄຕລ ຈຶ່ງຈະພິຈາລະນາຮັບແບບຟອມ.

**6)** ສຳລັບຜູ້ທີ່ **"ກຳລັງສຶກສາ ຫຼື ຮຽນຈົບແລ້ວແຕ່ຍັງບໍ່ທັນໄດ້ຮັບໃບປະກາດ ຫຼື ບໍ່ມີໃບປະກາດ ແລະ ໃບຄະແນນຢ່າງເປັນທາງການ"** ແມ່ນຍັງບໍ່ສາມາດສະໝັກໄດ້ເທື່ອ.

**7)** ລາຍລະອຽດເພີ່ມເຕີມສາມາດສອບຖາມໄດ້ທີ່ ພະແນກຈັດຕັ້ງ-ພະນັກງານ ໂທ: 021 213200-417 ຫຼື 418 ໃນໂມງລັດຖະການ.

**8)** ບໍ່ອະນຸຍາດໃຫ້ພໍ່ແມ່, ອ້າຍ-ເອື້ອຍ ແລະ ພີ່ນ້ອງຂອງຜູ້ສະໝັກງານມາພົວພັນຮັບ-ສົ່ງເອກະສານແທນ ແລະ ໃນການມາສົ່ງເອກະສານສະໝັກວຽກຕ້ອງຖືໃບປະກາດວິຊາສະເພາະ ແລະ ໃບຄະແນນ ສະບັບຂອງແທ້ມາຢັ້ງຢືນນຳ.

ນະຄອນຫຼວງວຽງຈັນ, ວັນທີ **02/03/2020**

**ຫົວໜ້າພະແນກຈັດຕັ້ງ-ພະນັກງານ**

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ພະແນກ ຈັດຕັ້ງແລະພະນັກງານ

ນ.ບົວໄພວັນ ນັນດາວົງ